ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ເລກທີ 0397 /ກຄພນ.ຄສລ

ນະຄອນຫຼວງວຽງຈັນ, ວັນທີ 28 ມີນາ 2018

## ແຈ້ງການ

**ເຖິງ:** ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ.

**ເລື່ອງ:** ການກຳນົດລາຄາຂາຍຍົກ-ຂາຍຍ່ອຍຂອງບັນດາບໍລິສັດທີ່ນຳເຂົ້າສິນຄ້າມາຈຳໜ່າຍ ຢູ່ ນະຄອນຫຼວງວຽງຈັນ.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ, ສະບັບເລກທີ 474/ນຍ, ລົງວັນທີ 18/11/2010;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 898/ຫສນຍ.ກລຂ, ລົງວັນທີ 22 ມິຖຸນາ 2017;
- ອີງຕາມ ກອງປະຊຸມປຶກສາຫາລື ລະຫວ່າງ ກົມການຄ້າພາຍໃນ ຮ່ວມກັບຂະແໜງການກ່ຽວຂ້ອງ ຄັ້ງວັນທີ 27 ມີນາ 2018 ກ່ຽວກັບການກຳນົດໂຄງປະກອບລາຄາສິນຄ້ານຳເຂົ້າ.

ເພື່ອເຮັດໃຫ້ວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເຂົ້າສູ່ລະບຽບການ, ບົນພື້ນຖານລາຍການສິນຄ້າ ແລະ ການບໍລິການ ປະເພດໃດ, ຂຶ້ນກັບຂະແໜງການໃດ, ແມ່ນຂະແໜງການນັ້ນເປັນຜູ້ຄຸ້ມຄອງ, ບໍ່ວ່າຈະເປັນສິນຄ້າທີ່ຜະລິດພາຍໃນ ກໍຄືສິນຄ້ານຳເຂົ້າຈາກຕ່າງປະເທດ ຕ້ອງໄດ້ມີການຄຸ້ມຄອງນັບແຕ່ຂອດນຳເຂົ້າ, ຂອດຂາຍຍົກ-ຂາຍຍ່ອຍ, ການກຳນົດຂອດກຳໄລ ແລະ ອື່ນໆ ເພື່ອປົກປ້ອງຜູ້ຊົມໃຊ້ ບໍ່ໃຫ້ຖືກເອົາລັດເອົາປຽບທາງດ້ານລາຄາ ແລະ ເຮັດໃຫ້ສັງຄົມມີຄວາມສະຫງົບ.

**ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍແຈ້ງມາຍັງທ່ານ ປະຕິບັດ ດັ່ງນີ້:**

1. ໃຫ້ເປັນເຈົ້າການໃນການເຊີນບັນດາຫົວໜ່ວຍທຸລະກິດ ນຳເຂົ້າສິນຄ້າທີ່ຖືກຕ້ອງຕາມກົດໝາຍ ຢູ່ ນະຄອນຫຼວງວຽງຈັນ ໂດຍສະເພາະບໍລິສັດນຳເຂົ້າສິນຄ້າ ປະເພດສະບຽງອາຫານ ແລະ ເຄື່ອງໃຊ້ສອຍປະຈຳວັນຈຳນວນໜຶ່ງ ເພື່ອເຂົ້າຮ່ວມປະຊຸມປຶກສາຫາລືກ່ຽວກັບການກຳນົດລາຄາຂາຍຍົກ-ຂາຍຍ່ອຍ (ຕົ້ນທຶນການນຳເຂົ້າ), ນັບທັງກຳນົດຂອດກຳ ໄລຂາຍຍົກ-ຂາຍຍ່ອຍ ຕາມຄວາມເໝາະສົມ.
2. ສຳລັບສະຖານທີ່, ວັນ ແລະ ເວລາ ຂອງກອງປະຊຸມ, ເຊີນຂະແໜງການຂອງລັດທີ່ກ່ຽວຂ້ອງ ແລະ ຄ່າໃຊ້ຈ່າຍຕ່າງໆ ແມ່ນມອບໃຫ້ພະແນກອຸດສາ ຫະກຳ ແລະ ການຄ້ານະຄອນຫຼວງວຽງຈັນ ເປັນຜູ້ຮັບຜິດຊອບ.
3. ສະເໜີໃຫ້ສົ່ງຮ່າງຕາຕະລາງກຳນົດລາຄາຂາຍ ຍົກ-ຂາຍຍ່ອຍ ແລະ ລາຍການສິນຄ້າທີ່ຕ້ອງກຳນົດ ເພື່ອສົ່ງໃຫ້ບັນດາບໍລິສັດນຳເຂົ້າສິນຄ້າ ເພື່ອເປັນຂໍ້ມູນປຶກສາຫາລື ໃນເວລາເຂົ້າຮ່ວມປະຊຸມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຫວັງວ່າຈະໄດ້ຮັບຄວາມຮ່ວມມືຈາກທ່ານເປັນຢ່າງດີ.

**ຫົວໜ້າກົມ**

ກະຊວງອຸດສາຫະກຳ ແລະ ການຄ້າ — ກົມການຄ້າພາຍໃນ

ບຸນຫຼົງ ແກ້ວສີພາ


ຕິດຕໍ່ພົວພັນ:

- ທ. ເອກຕິສັກ ອຸດົມຮັກ (020 99962645);
- ທ. ວີຈິດ ວົງຈັນ (020 97053666).